# SELECTION # 1204941: ການສ້າງກອບຄຸ້ມຄອງ ດ້ານສິ່ງແວດລ້ອມ ແລະ ສັງຄົມ ສໍາຫລັບໂຄງການຄຸ້ມຄອງຄວາມສ່ຽງ ຈາກໄພພິບັດ ໃນພາກພື້ນ ອາຊີຕາເວັນອອກສຽງໃຕ້ ສໍາຫຼັບ ສປປ ລາວ ແລະ ປະເທດກໍາປູເຈຍ

## ບົດລາຍງານກ່ອນການຈັດຕັ້ງປະຕິບັດໂຄງການ

## ສະບັບສຸດທ້າຍ

ກົມໂຍທາທິການທາງນໍ້າ
**ກະຊວງໂຍທາທິການ ແລະ ຂົນສົ່ງ**
ຖະໜົນລ້ານຊ້າງ
ວຽງຈັນ, ສປປ ລາວ

ແລະ

**ກຸ່ມທະນາຄານໂລກ**
ຖະໜົນ NW 1818 H
ນະຄອນຫລວງ ວໍຊິງຕັນ, ສະຫະລັດອາເມລິກາ 20433

ກະກຽມໂດຍ:
**ບໍລິສັດທີ່ປຶກສາແຮັດຟີວ**
#200 - 850 HARBOURSIDE DRIVE
ເມືອງແວນກູເວີ, ລັດບຣິຕິດ ໂຄລັມເບຍ
ປະເທດ ການາດາ V7P 0A3

**ມິຖຸນາ 2016**

WB7708

VERSION 2

# ສາລະບານ

ຕາຕະລາງ ..................iii
ເອກະສານຊ້ອນທ້າຍ ..................iii
ຄຳຫຍໍ້ ..................iv

**1.0 ຄຳນຳ ..................1**
**1.1 ປະຫວັດຄວາມເປັນມາ ..................1**
**1.2 ຈຸດປະສົງຂອງກອບຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMF) ..................1**
**1.3 ຂອບເຂດໜ້າວຽກ (SCOPE OF WORK) ..................2**

**2.0 ວິທີທາງ ແລະ ວິທີການດຳເນີນງານ ..................3**
**2.1 ວິທີທາງ ດ້ານເຕັກນິກ ..................3**
**2.2 ວິທີການ ໃນການດຳເນີນງານ ..................4**
2.2.1 ກອງປະຊຸມ ..................4
2.2.2 ການທົບທວນຄືນບັນດາເອກະສານ ..................5
2.2.3 ການເກັບກຳຂໍ້ມູນ ..................6
2.2.4 ການປະຕິບັດຕໍ່ບັນດາຜູ້ມີສ່ວນໄດ້ເສຍ ..................6
2.2.5 ການມີສ່ວນຮ່ວມຂອງຊຸມຊົນໃນການປະເມີນຜົນທາງສັງຄົມ ..................6

**3.0 ແຜນການດຳເນີນງານ ..................7**
**3.1 ກອງປະຊຸມຜ່ານມາ ..................7**
**3.2 ຂອບເຂດໜ້າວຽກ ..................7**
**3.3 ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມເບື້ອງຕົ້ນ (PESA) ..................7**
**3.4 ກອບຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ-ESMF ..................7**
3.4.1 ກອບນະໂຍບາຍຈັດສັນຍົກຍ້າຍ RPF ..................8
3.4.2 ກອບຂອງການສ້າງຂໍ້ຕົກລົງກັບກຸ່ມຊົນເຜົ່າ ..................8
3.4.3 ແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ..................8
**3.5 ການສ້າງຂໍ້ຕົກລົງກັບຜູ້ມີສ່ວນໄດ້ເສຍ ແລະ ການດຳເນີນເວທີສົນທະນາ ..................9**

**4.0 ຜົນຈະໄດ້ຮັບ ..................9**
**4.1 ບົດລາຍງານຜົນໄດ້ຮັບ ..................9**
**4.2 ຮ່າງບົດລາຍງານ ..................9**
**4.3 ການດຳເນີນກອງປະຊຸມປຶກສາຫາລື ແລະ ເວທີສົນທະນາ ..................10**

4.4 ການທົບທວນຮ່າງ ກອບ ESMF ຄັ້ງສຸດທ້າຍ......10

5.0 ການປະກອບທີມງານ ແລະ ການມອບວຽກ ...... 10

5.1 ໂຄງຮ່າງການຈັດຕັ້ງ ແລະ ການຊຸັບຊ້ອນ......10

5.2 ຜູ້ມີສ່ວນໄດ້ເສຍ......12

5.2.1 ໜ່ວຍປະຕິບັດງານ-DIA......12

5.2.2 ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ/ອົງການເຄື່ອນໄຫວທາງສັງຄົມ ແລະ ອົງກອນລະຫວ່າງລັດຖະບານ......12

5.2.3 ກຸ່ມເຜົ່າຊົນ ແລະ ກຸ່ມຄົນອື່ນໆ. ......13

6.0 ພາກສະຫລຸບ ແລະ ຂັ້ນຕອນຕໍ່ໄປ ...... 14

# ຕາຕະລາງ

ຕາຕະລາງ 1 ໂຄງການຍ່ອຍຂອງ SEA DRM - ຂໍ້ຄິດເຫັນລິເລີ່ມ ແລະ ບັນດາໜ້າວຽກ....................................................4

ຕາຕະລາງ 2 ການມອບໝາຍໜ້າວຽກຂອງທີ່ປຶກສາ (ແຮງງານຄົນ ມື້) ..................................................................... 11

# ເອກະສານຊ້ອນທ້າຍ

ເອກະສານຊ້ອນທ້າຍ A 1: ລາຍຊື່ຂອງໂຄງການຍ່ອຍທີ່ນໍາສະເໜີ

ເອກະສານຊ້ອນທ້າຍ A 2: ໄລຍະເວລາໃນການເຮັດວຽກ (ລວມມີ ແຜນເຮັດວຽກພາກສະໜາມ – ສະຖານທີ່, ລາຍລະອຽດຕ່າງໆ, ພາກສ່ວນທີ່ຈະພົບປະ, ສິ່ງຂອງທີ່ຈໍາເປັນ, ງົບປະມານ)

ເອກະສານຊ້ອນທ້າຍ A 3: ໂຄງຮ່າງປະເມີນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ ເບື້ອງຕົ້ນ (PESA)

ເອກະສານຊ້ອນທ້າຍ A 4: ໂຄງຮ່າງ ກອບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMF)

ເອກະສານຊ້ອນທ້າຍ A 5: ໂຄງຮ່າງ ກອບນະໂຍບາຍດ້ານການຈັດສັນຍົກຍ້າຍ (RPF)

ເອກະສານຊ້ອນທ້າຍ A 6: ໂຄງຮ່າງ ກອບການມີສ່ວນຮ່ວມຂອງຊົນເຜົ່າ (EGEF)

# ຄຳຫຍໍ້

| | |
|---|---|
| ADB | Asian Development Bank |
| ADPC | Asian Disaster Preparedness Center |
| AFD | Agence Française de Développement |
| CAN | Climate Action Network |
| CBO | Community-based Organization |
| CEP | GMS Core Environment Program |
| CGIAR | Consortium of Agricultural Research Centers |
| CSO | Civil Society Organization |
| DESIA | Department of Environment and Social Impact Assessment |
| DFAT | Australian Department of Foreign Affairs and Trade |
| DIA | Designated Implementing Agency |
| DOW | Department of Waterways |
| DRM | Disaster Risk Management |
| EA | Environmental Assessment |
| EC | European Commission |
| EGEF | Ethnic Group Engagement Framework |
| EGEP | Ethnic Group Engagement Plan |
| ESD | Environment and Social Division |
| ESIA | Environmental and Social Impact Assessment |
| ESMF | Environmental and Social Management Framework |
| ESMP | Environmental and Social Management Plan |
| FAO | Food and Agriculture Organization of the United Nations |
| GMS | Greater Mekong Sub-Region |
| HI | Handicap International |
| IDA | International Development Association |
| IFAD | International Fund for Agricultural Development |
| IPCC | Intergovernmental Panel on Climate Change |
| IPPF | Indigenous Peoples Planning Framework |
| IUCN | International Union for Conservation of Nature |
| IWMI | International Water Management Institute |
| JICA | Japan International Cooperation Agency |
| LDPA | Laos Disabled People's Association |
| MONRE | Ministry of Natural Resources and Environment |

| | |
|---|---|
| MPWT | Ministry of Public Works and Transport |
| MRC | Mekong River Commission |
| NGO | Non-government organization |
| NPA | Non-profit Association |
| OP | Operational Policies |
| PDR | People's Democratic Republic |
| PESA | Preliminary Environmental and Social Assessment |
| PTI | Public Works and Transport Institute |
| RAP | Resettlement Action Plan |
| RPF | Resettlement Policy Framework |
| SEA DRM | South East Asia Disaster Risk Management |
| Sida | Swedish International Development Agency |
| SOW | Scope of Work |
| TAF | The Asia Foundation |
| TBD | To Be Determined |
| TOR | Terms of reference |
| UNDP | United Nations Development Programme |
| UNEP | United Nations Environment Programme |
| UNFCCC | United Nations Framework Convention on Climate Change |
| UNSIDR | United Nations International Strategy for Disaster Reduction |
| USAID | United States Agency for International Development |
| WB | World Bank |
| WBG | World Bank Group |
| WCS | Wildlife Conservation Society |
| WWF | World Wide Fund for Nature |
| WBL | World Vision Lao PDR |

# 1.0 ຄຳນຳ

## 1.1 ປະຫວັດຄວາມເປັນມາ

ກຸ່ມທະນາຄານໂລກໄດ້ມີວັດຖຸປະສົງ ໃນການຊ່ວຍເຫຼືອທາງດ້ານການເງິນ ເພື່ອຈັດຕັ້ງປະຕິບັດໂຄງການຄຸ້ມຄອງຄວາມສ່ຽງຈາກ ໄພພິບັດໃນຂົງເຂດອາຊີຕາເວັນອອກສຽງໃຕ້ (SEA DRM) ຫຼື ໃນຂົງເຂດອະນຸພາກພື້ນລຸ່ມແມ່ນ້ຳຂອງ ທັງນີ້ກໍ່ເພື່ອລຸດຜ່ອນຄວາມສ່ຽງຈາກໄພນ້ຳຖ້ວມ ແລະ ມີງົບປະມານພຽງພໍເພື່ອນຳໃຊ້ເຂົ້າໃນໂຄງການດັ່ງກ່າວ. ແນໃສ່ເຮັດໃຫ້ ສາມປະເທດສະມາຊິກ ຊຶ່ງລວມມີ ສ.ປ.ປ ລາວ, ກຳປູເຈັຍ ແລະ ມຽນ້ມາ ໃຫ້ ບັນລຸຫມາກຜົນຕາມສາມເປົ້າໝາຍ ທີ່ຕັ້ງໄວ້ ຄື: (1) ການລົງທຶນໃສ່ການຄຸ້ມຄອງຄວາມສ່ຽງຈາກໄພນ້ຳຖ້ວມ (2) ການປະເມີນຄວາມສ່ຽງດ້ານໄພພິບັດ ແລະ ການຕອບສະໜອງທຶນ 3) ສ້າງກອງທຶນ ປະກັນໄພ ຮັບມືກັບເຫດການສຸກເສີນຄາດບໍ່ເຖິງ. ຈຸດປະສົງລວມຂອງໂຄງການ ແມ່ນເພື່ອ “ສົ່ງເສີມ ແລະ ປະສານຄວາມພ້ອມເພື່ອຄຸ້ມຄອງ ດ້ານຄວາມສ່ຽງທາງໄພພິບັດໃນອະນຸພາກພື້ນ”. ການຈັດປະຕິບັດໂຄງການຍ່ອຍ ອາດສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມໃນບໍລິເວນກ້ວາງ, ດ້ວຍເຫດຜົນດັ່ງກ່າວ ໂຄງການຄຸ້ມຄອງຄວາມສ່ຽງຈາກໄພພິບັດ (SEA DRM) ທີ່ທະນະຄານໂລກໃຫ້ການສະໜັບສະໜູນນີ້ຈຶ່ງແນະນຳໃຫ້ເຮັດການປະເມີນດ້ານສິ່ງແວດລ້ອມ ໃນໝວດ “A” ໂດຍ ໃຫ້ສອດຄ່ອງ ກັບນະໂຍບາຍຂອງທະນາຄານໂລກ (OP 4.01). ຜົນກະທົບ ທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ຈາກການຈັດຕັ້ງປະຕິບັດ ໂຄງການຍ່ອຍອາດສົ່ງຜົນກະທົບທາງລົບ ຕໍ່ປະຊາຊົນ ແລະ ຕໍ່ຊຸມຊົນ. ເພາະສະນັ້ນ ມາດຕະການປ້ອງກັນຕ່າງໆເພີ້ມເຕີມ ຈະຕ້ອງໄດ້ກຳນົດ ແລະ ລະບຸໃນເອກະສານ ESMF; ລວມທັງການມີສ່ວນຮ່ວມຂອງຊົນເຜົ່າສ່ວນນ້ອຍ (OP 4.10) ແລະ ການຈັດສັນຍົກຍ້າຍທີ່ຄາດບໍ່ເຖິງ (OP 4.12).

ທະນາຄານໂລກ ໄດ້ຈັດແບ່ງປະເພດການປະເມີນຜົນກະທົບ ທາງດ້ານສິ່ງແວດລ້ອມໂຄງການ ອອກເປັນ ສີ່ ໝວດ ໂດຍຂຶ້ນກັບເງື່ອນໄຂທາງ ປະເພດ, ທີ່ຕັ້ງ, ຄວາມລະອຽດອ່ອນ ແລະ ຂະໜາດຂອງໂຄງການ, ແລະ ລວມທັງເນື້ອຫາ ແລະ ລະດັບຂອງຜົນກະທົບທີ່ອາດມີຕໍ່ສິ່ງແວດລ້ອມ ແລະ ຕໍ່ສັງຄົມ.

**ໂຄງການປະເພດໝວດ “A”**: ຖືກນຳໃຊ້ກັບໂຄງການຄຸ້ມຄອງຄວາມສ່ຽງຈາກໄພພິບັດໃນເຂດອາຊີຕາເວັນອອກສຽງໃຕ້ SEA DRM ເພາະວ່າໂຄງການຍ່ອຍທີ່ນຳສະເໜີມານັ້ນມີຄວາມອາດສາມາດກໍ່ໃຫ້ເກີດຜົນກະທົບດ້ານລົບຢ່າງຫລວງຫລາຍຕໍ່ສິ່ງແວດລ້ອມ ແລະ ຕໍ່ສັງຄົມ ຊຶ່ງໄດ້ຄາດຄະເນວ່າ ຜົນກະທົບນັ້ນອາດມີ ຄວາມລະອຽດອ່ອນ ແລະ ມີຄວາມຫລາກຫຼາຍ.

**ໂຄງການປະເພດໝວດ “B”**: ຖືກນຳໃຊ້ກັບໂຄງການຍ່ອຍທີ່ສະເໜີມານັ້ນ ຊຶ່ງອາດມີຜົນກະທົບທາງດ້ານລົບ ຕໍ່ທຳມະຊາດ ແລະ ສັງຄົມຈຳກັດໃນບໍລິເວນເນື້ອທີ່ໃດໜຶ່ງ (ຕ.ຢ. ເຂດຊຸ່ມນ້ຳ, ເຂດປ່າດົງ, ເຂດທົ່ງຫ້ຍາ, ແລະ ແຫລ່ງທີ່ຢູ່ອາໃສ ຂອງສັດນາໆຊະນິດ) ແຕ່ຈະມີຜົນກະທົບນ້ອຍກ່ວາໂຄງການຍ່ອຍຊຶ່ງຈັດໃນໝວດປະເພດ “A”. ຜົນກະທົບດັ່ງກ່າວແມ່ນຈຳກັດສະເພາະເຂດ; ແລະ ມີພື້ນທີ່ໄດ້ຮັບຜົນກະທົບສ່ວນໜ້ອຍທີ່ຈະບໍ່ກັບຄືນສະພາບເດີມ; ແລະເກືອບທັງໝົດກໍລະນີທີ່ມີຜົນກະທົບແມ່ນສາມາດເຮັດມາດຕະການແກ້ໄຂຫລຸດຜ່ອນຜົນກະທົບດັ່ງກ່າວໄດ້. ໂຄງການ ປະເພດໝວດ “B” ແມ່ນຈະໄດ້ຖືກປະຕິບັດຕາມຫຼັກການຂອງການປ້ອງກັນຂອງທະນາຄານໂລກເຊັ່ນດຽວກັນກັບໂຄງການໝວດ “A” ແຕ່ຈະຢູ່ໃນລະດັບຂອບເຂດທີ່ແຄບກ່ວາ.

**ໂຄງການປະເພດໝວດ “C”**: ໃຫ້ປະຕິບັດກັບໂຄງການຍ່ອຍທີ່ສະເໜີມາ ທີ່ເຫັນວ່າມີຜົນກະທົບໜ້ອຍ ຫຼື ບໍ່ມີຜົນກະທົບຕໍ່ສິ່ງແວດລ້ອມທາງທຳມະຊາດ ແລະ ສັງຄົມເລີຍ. ໃນກໍລະນີດັ່ງກ່າວ ທະນາຄານໂລກ ບໍ່ຈຳເປັນນຳໃຊ້ມາດຕະການປ້ອງກັນພຽງແຕ່ຈະລົງຕິດຕາມກວດກາເປັນບາງຄັ້ງຄາວຕໍ່ບາງເຂດທີ່ຄັດເລືອກ.

**ໂຄງການປະເພດໝວດ “FI”**: ເປັນໂຄງການທີ່ສະເໜີຂຶ້ນໂດຍ SEA DRM ແລະ ສະໜັບສະໜູນທາງການເງິນຈາກ ສະຖາບັນການເງິນໃນກຸ່ມເຄືອຄ່າຍທະນາຄານໂລກ WBG, ກອງທຶນສາກົນເພື່ອການພັດທະນາ (IDA), ແລະ ອາດເປັນໂຄງການທີ່ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມແຕ່ຈະສາມາດປ້ອງກັນດ້ວຍເຄື່ອງມືທີ່ແທດເໝາະຊຶ່ງນອນໃນ ກອບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMF).

## 1.2 ຈຸດປະສົງຂອງກອບຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMF)

ESMF ຈະເປັນທິດທາງໃນການສ້າງເອກະສານ ເພື່ອເປັນເຄື່ອງມື ຫລຸດຜ່ອນຜົນກະທົບ ທີ່ອາດຈະເກີດຂຶ້ນ ໃນການຈັດຕັ້ງປະຕິບັດໂຄງການຍ່ອຍ ເປັນຕົ້ນ ແບບແຜນວິທີເຮັດວຽກ, ວິທີການຈັດຕັ້ງປະຕິບັດ. ເພາະສະນັ້ນ, ESMF ແມ່ນການສະໜອງເຄື່ອງມືໃນການປົກປ້ອງ, ການຕັດສິນໃຈ ແລະ ທັງເປັນຄູ່ມື ໃນການສ້າງ ແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMP), ແຜນດຳເນີນການຈັດສັນຍົກຍ້າຍ (RAP) ແລະ ແຜນມີສ່ວນຮ່ວມ ຂອງຊົນເຜົ່າກຸ່ມນ້ອຍ (EGEP) ແລະ ເປັນເຄື່ອງມືປ້ອງກັນອື່ນໆ (ຖ້າມີ) ໃນຊ່ວງ

ບາດກ້າວການສ້າງບົດວິພາກເສດຖະກິດເຕັກນິກ ແລະ ການອອກແບບໂຄງການຍ່ອຍດັ່ງກ່າວ. ESMF ຈະໃຫ້ຄຳແນະນຳແກ່ໜ່ວຍປະຕິບັດງານ (DIA) ແລະ ພາກສ່ວນທີ່ກ່ຽວຂ້ອງຂອງລັດ ເພື່ອຮັບປະກັນເຖິງຄວາມຕ້ອງການໃນການປົກປ້ອງ ຈາກຂໍ້ສະເໜີລິເລີ່ມ ແລະ ແຜນງານເພີ້ມເຕີມຈາກໂຄງການຕົ້ນຕໍ SEA DRM ວ່າໂຄງການຍ່ອຍດັ່ງກ່າວສອດຄ່ອງກັບລະບຽບການດ້ານສິ່ງແວດລ້ອມ ແລະ ສັງຄົມຂອງສ.ປ.ປ ລາວ. ESMF ຕ້ອງຮັບປະກັນວ່າບັນດາເອກະສານຕ່າງໆ ຂອງທະນາຄານໂລກທີ່ກ່ຽວຂ້ອງ ກັບການປະເມີນຜົນດ້ານສິ່ງແວດລ້ອມ ແລະ ດ້ານນະໂຍບາຍທາງສັງຄົມ, ລວມທັງຂະບວນການ ແລະ ວິທີການຕ່າງໆ ແມ່ນຈະຖືກປະກອບເຂົ້າ ໃນເອກະສານເຄື່ອງມືປ້ອງກັນ ຂອງໂຄງການ SEA DRM.

ESMF ຍັງຈະຊ່ວຍໃຫ້ໜ່ວຍປະຕິບັດງານ (DIA) ຂອງປະເທດທີ່ກູ້ຢືມ ສາມາດກຳນົດໄດ້ບັນດາອຸປະສັກທີ່ອາດມີ ແລະ ຊ່ວຍຫລຸດຜ່ອນ ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມທີ່ອາດຈະເກີດຂຶ້ນຈາກການຈັດຕັ້ງປະຕິບັດໂຄງການຍ່ອຍ. ຕາມຂະບວນການດຳເນີນງານແບບຮ່ວມມືກັນ, ການຮັບຮອງເອົາຜົນຂອງໂຄງການນັ້ນ ແມ່ນຂຶ້ນ ກັບວິທີທາງທີ່ຜົນຂອງການນັ້ນໄດ້ຖືກສ້າງ, ຖືກແນະນຳ ແລະ ນຳໃຊ້ເຂົ້າ ໃນລະບົບ ແລະ ຂະບວນການໃນລະດັບພາກພື້ນ, ລະດັບຊາດ ແລະ ລະດັບທ້ອງຖິ່ນ , ເຊື່ອມໂຍງເຂົ້າໃນລະບົບທີ່ມີໃນທ້ອງຖິ່ນ. ເພື່ອຮັບປະກັນໃຫ້ມີການຮຽນຮູ້, ມີການສ້າງຄວາມອາດສາມາດ ລວມທັງການເປັນເຈົ້າການ ແລະ ການຮັບຮອງເອົາຂະບວນການຂອງ ESMF, ຄູ່ຮ່ວມງານຈາກກະຊວງໂຍທາທິການ ແລະ ຂົນສົ່ງ (ຍທຂ) MPWT ແລະ ໜ່ວຍປະຕິບັດງານ ຂອງກົມໂຍທາທິການທາງນໍ້າ, ຈະຕ້ອງໄດ້ເຮັດວຽກຄຽງບ່າຄຽງໄລ່ກັບບໍລິສັດທີ່ປຶກສາຕະຫລອດຊ່ວງໄລຍະ ເວລາຂອງໂຄງການ. ດ້ວຍເຫດນີ້ຄູ່ຮອມງານຈາກລັດຈຶ່ງຕ້ອງໄດ້ຍົກສູງຄວາມຮູ້ ແລະ ຄວາມສາມາດໃນການນຳໃຊ້ ຄູ່ ູມືການປ້ອງກັນຜົນກະທົບ ຈາກການຈັດຕັ້ງປະຕິບັດໂຄງການຍ່ອຍ , ລວມທັງຂະບວນການມີສ່ວນຮ່ວມຂອງຊຸມຊົນ ລວມທັງການເປີດເຜີຍຂໍ້ມູນຂ່າວສານຕ່າງໆ ໃຫ້ສັງຄົມຮັບຮູ້ຢ່າງກ້ວາງຂວາງ.

## 1.3 ຂອບເຂດໜ້າວຽກ (SCOPE OF WORK)

ອີງໃສ່ຄຳເຫັນ ແລະ ຂໍ້ສັງເກດຕໍ່ໂຄງການຄຸ້ມຄອງຄວາມສ່ຽງຈາກໄພພິບັດໃນເຂດອາຊີຕາເວັນອອກສຽງໃຕ້ ຫຼື (SEA DRM), ກອບໜ້າວຽກ (TOR) ຂອງການສ້າງ ESMF ຊຶ່ງໄດ້ພິຈາລະນາໂດຍທະນາຄານໂລກ (WB) ແລະ ໜ່ວຍປະຕິບັດງານ (DIA). ທີ່ປຶກສາຈະຕ້ອງເຮັດວຽກປະສານງານກັບ DIA, ເອີ້ນວ່າກົມໂຍທາທິການທາງນໍ້າ DOW, ເພື່ອຮ່ວມກັນກະກຽມທາງດ້ານການຈັດຕັ້ງ ແລະ ການເຄື່ອນໄຫວສະໜອງຄວາມຕ້ອງການຂອງໂຄງການ SEA DRM ຕາມເຈດຈຳນົງຂອງ ESMF.

ທີ່ປຶກສາໄດ້ສຶກສາຄືນເອກກະສານທີ່ສະໜອງໃຫ້ໂດຍທະນາຄານໂລກຊຶ່ງລວມມີຄູ່ມືແນະນຳ ESMF, ນະໂຍບາຍໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ (ESIA), ບັນດາເອກະສານນິຕິກຳ ແລະ ຂໍ້ກຳນົດກົດລະບຽບຕ່າງໆທີ່ກ່ຽວຂ້ອງ, ແລະເອກະສານປະເມີນຜົນຕໍ່ສິ່ງແວດລ້ອມ (EA) ຊຶ່ງເປັນ ເຄື່ອງມືປ້ອງກັນ ຂອງທະນາຄານໂລກ.

ຂອບເຂດໜ້າວຽກ ໄດ້ແຈ້ງໃຫ້ຊາບຜ່ານກອງປະຊຸມປຶກສາຫາລືຄັ້ງວັນທີ 9/5/2016 ກັບກະຊວງ ຍທຂ, ກົມໂຍທາທິການ ທາງນໍ້າ (DOW), ກົມສິ່ງແວດລ້ອມ ແລະ ສັງຄົມ (ESD) ແລະ ການປະຊຸມວາງແຜນເບື້ອງຕົ້ນຮ່ວມກັບໜ່ວຍງານສະເພາະກິດຂອງໂຄງການ SEA DRM ຂອງທະນາຄານໂລກທີ່ດຳເນີນຢູ່ນະຄອນຫລວງວຽງຈັນ, ສປປລາວ.

ໂຄງການ SEA DRM ທີ່ໄດ້ສະເໜີປະກອບດ້ວຍ 3 ອົງປະກອບຕົ້ນຕໍຄື: (i) ອົງປະກອບ 1: ການລົງທຶນໃນການຄຸ້ມຄອງຄວາມສ່ຽງ ຈາກໄພນໍ້າຖ້ວມ; (ii) ອົງປະກອບ 2: ການປະເມີນຜົນຄວາມສ່ຽງຕໍ່ໄພພິບັດ ແລະ ການສະໜອງທຶນແລະ (iii) ອົງປະກອບ 3: ການຮັບມືກັບເຫດການສຸກເສີນ ແລະ ຄາດບໍ່ເຖິງ. ຂອບເຂດໜ້າວຽກທີ່ບໍລິສັດທີ່ປຶກສາ ຈັດຕັ້ງປະຕິບັດໃນປະຈຸບັນ ແມ່ນນອນໃນອົງປະກອບ ທີ 1, ຊຶ່ງໄດ້ແບ່ງອອກເປັນ 3 ໜ້າວຽກຕົ້ນຕໍ ແລະ ໜ້າວຽກປົກຍ່ອຍດັ່ງນີ້:

**ໜ້າວຽກ 1: ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຕໍ່ສັງຄົມ ເບື້ອງຕົ້ນ (PESA)**

- ໜ້າວຽກ 1.1.- ວິເຄາະຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ ທີ່ອາດຈະເກີດຂຶ້ນ ພ້ອມກັບຄວາມສ່ຽງ
- ໜ້າວຽກ1.2.-ເປີດເວທີສົນທະນາໃຫ້ຜູ້ທີ່ມີຜົນໄດ້ຜົນເສຍຈາກໂຄງການ, ເຜົ່າຊົນກຸ່ມນ້ອຍ ແລະ ກຸ່ມຄົນທີ່ມີຄວາມອ່ອນແອ.

**ໜ້າວຽກ 2: ສ້າງກອບຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMF)**

- ໜ້າວຽກ 2.1.- ສະເໜີວິທີການແກ້ໄຂບັນຫາສິ່ງແວດລ້ອມ ແລະ ສັງຄົມ
- ໜ້າວຽກ 2.2.-ສັງລວມ ບັນດາກົດໝາຍ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ

- ໜ້າວຽກ 2.3.-ເຮັດການປະເມີນດ້ານບົດບາດຍິງຊາຍ ຈາກປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການ ເພື່ອໃຫ້ຮູ້ ແລະ ພິຈາລະນາຫາວິທີປ້ອງກັນດ້ວຍການເອົາບັນຫາບົດບາດຍິງຊາຍ ເຂົ້ານຳ
- ໜ້າວຽກ 2.4.-ກຳໜົດຊ່ອງຫວ່າງ ແລະ ຄວາມຕ້ອງການດ້ານອົງກອນ ແລະ ດ້ານຄວາມອາດສາມາດໃນການຕິດຕາມ ແລະ ຈັດຕັ້ງປະຕິບັດ ESMF
- ໜ້າວຽກ 2.5.- ການເຜີຍແຜ່ ແລະ ການປຶກສາຫາລື
- ໜ້າວຽກ 2.6.-ຄາດຄະເນງົບປະມານໃນການຈັດຕັ້ງປະຕິບັດ ESMF

**ໜ້າວຽກ 3: ສ້າງຂໍ້ຕົກລົງກັບຜູ້ມີສ່ວນໄດ້ເສັຍ ແລະ ການດຳເນີນກອງປະຊຸມປຶກສາຫາລື**

- ໜ້າວຽກ3.1.-ການປຶກສາຫາລືກັບມອນຊົນ ແລະ ການເຜີຍແຜ່ຂໍ້ມູນ

# 2.0 ວິທີທາງ ແລະ ວິທີການດຳເນີນງານ

## 2.1 ວິທີທາງ ດ້ານເຕັກນິກ

ໂຄງການ SEA DRM ຊຶ່ງ ທະນາຄານໂລກ "ຈະໃຫ້ການສະນັບສະໜູນດ້ານທຶນຮອນເຂົ້າໃນການຄຸ້ມຄອງຄວາມສ່ຽງດ້ານໄພນ້ຳຖ້ວມ ກໍຄືການປະກອບສ່ວນເຂົ້າໃນການບໍລິຫານຈັດການຄວາມສ່ຽງດ້ານໄພພິບັດທາງທຳມະຊາດ ແລະ ການຫຼຸດຜ່ອນຄວາມທຸກຍາກ ກໍຄື ການສ້າງຄວາມເຂັ້ມແຂງໃນການຄຸ້ມຄອງ, ບໍລິຫານ ຄວາມສ່ຽງດ້ານໄພພິບັດ ໄລຍະຍາວໃນ ສ.ປ.ປ ລາວ ..."(WB SEA DRM Project ESMF TOR). ການປຶກສາຫາລື ກັບຄູ່ຮ່ວມງານຈາກ ທະນາຄານໂລກ ແລະ ກະຊວງໂຍທາທິການ ແລະ ຂົນສົ່ງ (ຍທຂ) ໜ່ວຍປະຕິບັດງານ (MPWT DIA) ໄດ້ບັນລຸໃນຫລາຍບັນຫາ ຂໍ້ຄິດເຫັນຕໍ່ການສະເໜີ ແລະ ບັນດາໜ້າວຽກ ຂອງໂຄງການຍ່ອຍ ໃນ ສ.ປ.ປ ລາວ ທີ່ກ້າວໄປເຖິງການສຶກສາຄືນ ແລະການພິຈາລະນາ ໃນກໍລະນີ ທີ່ພົວພັນເຖິງຄວາມອາດສາມາດເກີດຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ບັນດາມາດຕະການຫຼຸດຜ່ອນຂໍ້ຂັດແຍ່ງ. ດ້ວຍເຫດນີ້,ກອບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMF) ໂດຍນຳໃຊ້ເຄື່ອງມືປ້ອງກັນ ຂອງທະນາຄານໂລກ (OP 4.01) ແລະ ແຜນນະໂຍບາຍ ດຳເນີນວຽກສະໜາມ (OP 4.10) ແລະ (OP 4.12).

ນອກນັ້ນ ຍັງມີບັນດາ ນະໂຍບາຍ ແຫ່ງຊາດ, ລະຫວ່າງຊາດ ຂອງພູມິພາກ ໃນການປ້ອງກັນ ແລະ ນິຕິກຳຕ່າງໆ ທີ່ພົວພັນ ເຖິງໂຄງການຄຸ້ມຄອງຄວາມສ່ຽງຈາກໄພພິບັດ ຫຼື SEA DRM ຂອງປະເທດທີ່ກູ້ຢືມ, ການສົມທົບຈາກທັງສາມປະເທດ ຫຼື ຈາກຂົງເຂດ ລຸ່ມແມ່ນ້ຳຂອງ (GSM) ລ້ວນແຕ່ເປັນເອກະສານຄູ່ຄອນແກ່ການສຶກສາຄືນ ແລະ ເກັບບັນທຶກ.

ໃນການຮັບເອົາວຽກນີ້, ທີ່ປຶກສາ ຈະນຳໃຊ້ວິທີທາງ ແບບມີສ່ວນຮ່ວມ ຊຶ່ງລວມເຖິງ ການເຮັດການປຶກສາຫາລືແບບມີສ່ວນຮ່ວມ ກັບພະນັກງານຄູ່ຮ່ວມງານ ຈາກ ກະຊວງ ຍທຂ/ ກົມໂຍທາທິການທາງນ້ຳ ໜ່ວຍປະຕິບັດງານ (MPWT/DOW DIA), ກັບບັນດາ ຜູ້ທີ່ມີສ່ວນໄດ້ເສຍ ແລະ ກັບ ປະຊາຊົນທ້ອງຖິ່ນ (ຕ.ຢ. ຊົນເຜົ່າກຸ່ມນ້ອຍ ແລະ ກຸ່ມຄົນທີ່ມີຄວາມອ່ອນແອ -(ແມ່ຍິງ, ຜູ້ຊາຍ, ຊາວໜຸ່ມ ແລະ ເດັກນ້ອຍ, ຜູ້ເຖົ້າ ແລະ ຜູ້ພິການເປັນຕົ້ນ). ວິທີທາງປະຕິບັດ ແມ່ນແນໃສ່ ສ້າງຄວາມເປັນເຈົ້າການ ແລະ ຄວາມເຂົ້າໃຈ ແລະ ຊາບຊຶ້ມ ຕໍ່ກອບການຄຸ້ມຄອງສິ່ງແວດລ້ອມ ແລະສັງຄົມ ແລະ ເຄື່ອງມືປົກປ້ອງ, ພາລະໜ້າທີ່ ແລະ ຄວາມຮັບຜິດຊອບ, ແລະ ມີທັດສະນະ ອັນເປັນພື້ນຖານໃນການເສີມຂະຫຍາຍ ການປະສານງານ ກ້າວເຖິງສຳເລັດຈຸດປະສົງລະດັບຄາດໝາຍ ຂອງ ໂຄງການຄຸ້ມຄອງຄວາມສ່ຽງຈາກໄພພິບັດ ຫຼື SEA DRM. ວິທີທາງແບບມີສ່ວນຮ່ວມ ແລະ ມີການປຶກສາຫາລືແນໃສ່ ຮັບປະກັນ ດ້ານການປະຊາສຳພັນ ແລະ ການປະສານງານທີ່ມີປະສິດທິຜົນ ກັບບັນດາຜູ້ທີ່ມີສ່ວນໄດ້ເສຍ ແລະ ກັບປະຊາຊົນ ບັນດາເຜົ່າ ທັງໃນລະດັບຊາດ ແລະ ໃນລະດັບທ້ອງຖິ່ນ.

ພາຍຫລັງການປຶກສາຫາລື ກັບຄູ່ຮ່ວມງານຈາກ ທະນາຄານໂລກ ແລະ ຈາກກະຊວງ ຍທຂ/ກົມໂຍທາທິການທາງນ້ຳ ໜ່ວຍປະຕິບັດງານ (MPWT/DOW DIA) ໄດ້ບັນລຸໃນຫລາຍບັນຫາ ຂໍ້ຄິດເຫັນຕໍ່ການສະເໜີ ແລະ ບັນດາໜ້າວຽກ ຂອງໂຄງການຍ່ອຍ (ຕາຕະລາງ ເບີ 1). ເອກະສານຊ້ອນທ້າຍ A-1 ສັງລວມລາຍຊື່ຢ່າງລະອຽດ ຂອງບັນດາໂຄງການຍ່ອຍດັ່ງນີ້.

ຕາຕະລາງ 1 ໂຄງການຍ່ອຍຂອງ SEA DRM - ຂໍ້ຄິດເຫັນລິເລີ່ມ ແລະ ບັນດາໜ້າວຽກ

| ລດ | ໂຄງການຍ່ອຍຂອງ SEA DRM -ຂໍ້ຄິດເຫັນລິເລີ່ມ ຫຼື ບັນດາໜ້າວຽກ. | ທຶນ (USD) | ທີ່ຕັ້ງໂຄງການ |
|---|---|---|---|
| 1 | ສະຖາບັນອຸທົກກະສາດ | 4 ລ້ານ | ຈະແຈ້ງພາຍຫລັງ |
| 2 | ການຄຸ້ມຄອງຄວາມສ່ຽງຈາກໄພນໍ້າຖ້ວມໃນຕົວເມືອງ | 20 ລ້ານ | ສປປ ລາວ: ສະເໜີໂຄງການໂຄງລ່າງພື້ນຖານ ໃນແຂວງອຸດົມໄຊ:<br>▪ ວຽກປ້ອງກັນຕະຝັ່ງເຈື່ອນ<br>▪ ວຽກສ້າງຄັນຄູກັ້ນນໍ້າ<br>▪ ວຽກ ປັບປຸງຄອງນໍ້າ<br>▪ ວຽກ ສ້າງປະຕູກັ້ນນໍ້າ<br>▪ ວຽກ ສອນແຄມນໍ້າ |
| 3 | ໂຄງການທາງການເງິນ | 5 ລ້ານ | ກ/ຊ ການເງິນ |

ຈາກການປຶກສາຫາລື ກັບ ກະຊວງ ຍທຂ/ກົມໂຍທາທິການທາງນໍ້າ (MPWT/DOW) ໃນກອງປະຊຸມເພື່ອເລີ່ມໂຄງການ ໄດ້ກຳໜົດຕາຕະລາງວັນເວລາເບື້ອງຕົ້ນເພື່ອການລົງຢ້ຽມຢາມພາກສະໜາມຈຸດທີ່ຕັ້ງຂອງໂຄງການຍ່ອຍ (ເບິ່ງເອກະສານຊ້ອນທ້າຍ-A2: ຮູບພາບ-A2.1). ຊ່ວງເວລາການຂຽນແຜນການຢູ່ນັ້ນ, ການລົງສະໜາມເພື່ອການການສຳຫຼວດຈຸດທີ່ຕັ້ງແມ່ນຍັງເພີ່ມແຜນວຽກໃນການພົບປະກັບບັນດາຜູ້ທີ່ມີສ່ວນໄດ້ເສຍ, ກັບຊຸມຊົນ ແລະ ກັບປະຊາຊົນ ບັນດາເຜົ່າ. ແຜນການລົງສະໜາມ ເປັນເວລາ 1 ອາທິດໄດ້ຖືກຮັບຮອງເອົາເພື່ອສຳເລັດການເຮັດວຽກຢູ່ແຂວງອຸດົມໄຊ ໃນຈຸດທີ່ຕັ້ງໂຄງການປ້ອງກັນນໍ້າຖ້ວມ ແລະ ຕະຝັ່ງເຈື່ອນ (ລວມມີ ກໍ່ສ້າງ ປະຕູນໍ້າ, ສ້າງເຄື່ອນຝາຍ, ຄູກັ້ນນໍ້າ ແລະ ກັນຕະຝັ່ງເຈື່ອນ). ພ້ອມດຽວກັນ, ຍັງໄດ້ພິຈາລະນາ ໂຄງການຍ່ອຍ ສ້າງເດີ່ນສະໜາມແຄມຫ້ວຍນໍ້າຢູ່ສອງແຫ່ງ ເພື່ອຈຸດປະສົງປ້ອງກັນນໍ້າຖ້ວມ ແລະ ທັງນໍາໃຊ້ເປັນສະຖານທີ່ພັກຜ່ອນໃນຂອບເຂດ ເມືອງໄຊ.

## 2.2 ວິທີການ ໃນການດຳເນີນງານ

ວິທີການໃນການດຳເນີນງານ ແມ່ນໄດ້ຖືກສ້າງຂຶ້ນ ຈາກການເຮັດການທົບທວນຄືນ ກອບໜ້າວຽກ (TOR) ໃນການສ້າງ ESMF ຂອງໂຄງການຄຸ້ມຄອງຄວາມສ່ຽງຈາກໄພພິບັດ, ແລະ ຈາກການທົບທວນບັນດາເອກະສານທີ່ກ່ຽວຂ້ອງອື່ນໆ, ຈາກການປຶກສາຫາລືກັບທະນາຄານໂລກ, ແລະ ກະຊວງ ຍທຂ/ກົມໂຍທາທິການທາງນໍ້າ (MPWT/DOW). ນອກນັ້ນຍັງໄດ້ຖອດຖອນເອົາບັນດາບົດຮຽນ ແລະ ແບບຢ່າງໃນພາກປະຕິບັດໂຄງການປະເພດ A ໃນ ກອບ ESMF.

### 2.2.1 ກອງປະຊຸມ

ກອງປະຊຸມຫລາຍວາລະໄດ້ຖືກຈັດຕັ້ງປະຕິບັດ ແລະ ອີກຫລາຍກອງປະຊຸມຍັງຈະຖືກດຳເນີນພາຍໃຕ້ໂຄງການ SEA DRM.

(i) ກອງປະຊຸມ ເຈລະຈາກັບທະນາຄານໂລກ.

ການປຶກສາຫາລື ລະຫວ່າງທີມງານທີ່ຮັບຜິດຊອບ ໂຄງການ SEA DRM ຂອງທະນາຄານໂລກ ແລະ ບໍລິສັດ ທີ່ປຶກສາ Hatfield ຄັ້ງວັນທີ 18/4/2016 ໄດ້ຕົກລົງ ແລະ ສະຫຼູບຮັບຮອງເອົາແຜນເຕັກນິກ ແລະ ງົບປະມານຮັບໃຊ້ ການບໍລິການໃຫ້ຄຳປຶກສາກ່ຽວກັບການສ້າງ ESMF. ພ້ອມກັນນັ້ນ, ກອງປະຊຸມຄັ້ງວັນທີ 3/5/2016 ຍັງໄດ້ປຶກສາຫາລືໃນບາງບັນຫາສະເພາະທີ່ກ່ຽວກັບການບໍລິການໃຫ້ຄຳປຶກສາ.

(ii) ກອງປະຊຸມຜ່ານມາ

ກອງປະຊຸມຂັ້ນປະຖົມມະເລີກ ໄດ້ສຳເລັດລົງໃນຄັ້ງວັນທີ 9/5/2016 ທີ່ນະຄອນຫລວງວຽງຈັນ ໃນການເຮັດວຽກຮ່ວມກັບກະຊວງ ຍທຂ/ກົມໂຍທາທິການທາງນໍ້າ (MPWT/DOW), ພະແນກສິ່ງແວດລ້ອມ ແລະ ສັງຄົມ (ESD), ສະຖາບັນໂຍທາທິການ ແລະ ການຂົນສົ່ງ (PTI), ໜ່ວຍງານສະເພາະກິດຂອງທະນາຄານໂລກ ແລະ ບໍລິສັດທີ່ປຶກສາ (Hatfield).

(iii) ກອງປະຊຸມທີ່ພວມສືບຕໍ່

ກອງປະຊຸມການພົບປະຫາລືກັບຄູ່ຮ່ວມງານ ຈາກ ກະຊວງ ຍທຂ/ກົມໂຍທາທິການທາງນ້ຳ ໜ່ວຍປະຕິບັດງານ (MPWT/DOW DIA ແມ່ນຍັງສືບຕໍ່ດຳເນີນເປັນປົກກະຕິ ບົນພື້ນຖານການປັບປຸງອົງກອນລັດໃຫ້ເຂັ້ມແຂງ ເສີມຂະຫຍາຍ ຂີດຄວາມສາມາດ ຕະຫລອດ ຊ່ວງໄລຍະຂອງການໃຫ້ຄຳປຶກສາ. ການປະຊຸມຊຶ່ງແມ່ນທັງການປຶກສາຫາລືແບບທາງການ ແລະ ບໍ່ເປັນທາງການຈະດຳເນີນໄປຕະຫຼອດຊ່ວງໄລຍະ ການເຮັດວຽກຮ່ວມກັບເພື່ອນຮ່ວມງານຈາກ ກະຊວງ ຍທຂ/ກົມໂຍທາທິການທາງນ້ຳ/ໜ່ວຍປະຕິບັດງານ (MPWT/DOW DIA) ແລະ ຊ່ວງໄລຍະເວລາລົງສະໜາມຢູ່ແຂວງອຸດົມໄຊ. ໃນຊ່ວງເວລາການລົງເຮັດວຽກ ພາກສະໜາມ, ຄູ່ຮ່ວມງານ ຈາກ ກະຊວງ ຍທຂ/ກົມໂຍທາທິການທາງນ້ຳ ໜ່ວຍປະຕິບັດງານ, ກະຊວງ ແລະ ກົມກອງທີ່ກ່ຽວຂ້ອງ, ບັນດາຜູ້ທີ່ມີສ່ວນໄດ້ເສຍ ແລະ ປະຊາຊົນ ບັນດາເຜົ່າ ຈະໄດ້ຮັບຜົນປະໂຫຍດ ຈາກ ບົດຮຽນຕົວຈິງ ແລະ ແບບຢ່າງໃນພາກປະຕິບັດ ແລະ ການນຳໃຊ້ແບບແຜນເຄື່ອງມືໃນການປ້ອງກັນສິ່ງແວດລ້ອມ ແລະ ສັງຄົມ.

(iv) ກອງປະຊຸມທີ່ພວມສືບຕໍ່ກອງປະຊຸມປຶກສາຫາລື ແລະ ເວທີສົນທະນາ

ໄດ້ຂຶ້ນແຜນເປີດກອງປະຊຸມ ສອງຄັ້ງ. ໃນການເປີດກອງປະຊຸມປຶກສາຫາລື ຄັ້ງທີ່ 1 ແມ່ນມີການເຂົ້າຮ່ວມຂອງ ບັນດາແຂກຜູ້ທີ່ມີສ່ວນໄດ້ເສຍ, ຊຶ່ງລວມເອົາ ກະຊວງ ຍທຂ/ ກົມໂຍທາທິການທາງນ້ຳ /ໜ່ວຍປະຕິບັດງານ (MPWT/DOW DIA) ແລະ ຜູ້ທີ່ຈະໃຫ້ການຕັດສິນບັນຫາ ເພື່ອສຶກສາກວດຄືນ ແລະ ປະກອບຄຳເຫັນໃຫ້ ບົດລາຍງານກອງປະຊຸມດັ່ງກ່າວ. ການເປີດກອງປະຊຸມເວທີສົນທະນາ ຄັ້ງທີ່ 2 ແມ່ນແນໃສ່ວົງກ້ວາງ ລວມເອົາບັນດາແຂກຜູ້ທີ່ມີສ່ວນໄດ້ເສຍ ຈາກຫລາຍກະຊວງ ໃນລະດັບທົ່ວປະເທດ ແລະ ລະດັບທ້ອງຖິ່ນ, ສະມາຄົມ ການຈັດຕັ້ງທາງສັງຄົມ (CSO) ລວມທັງອົງການທີ່ບໍ່ຂຶ້ນກັບລັດຖະບານ (NGOs) ແລະ ອົງການຈັດຕັ້ງປະຊາຄົມພື້ນຖານ (CBOs) ແລະ/ຫຼື ຂັ້ນນຳໃນທ້ອງຖິ່ນ. ກອງປະຊຸມປຶກສາຫາລື ຄັ້ງທີ່ 1 ແມ່ນວັນທີ 20/6/2016 ແລະ ຄາດໝາຍ ການເປີດກອງປະຊຸມເວທີສົນທະນາ ຄັ້ງທີ່ 2 ແມ່ນ ວັນທີ 26/8/2016.

## 2.2.2 ການທົບທວນຄືນບັນດາເອກະສານ

ການທົບທວນຄືນບັນດາເອກະສານທີ່ກ່ຽວຂ້ອງຕ່າງໆທີ່ສະໜອງໃຫ້ໂດຍ ທະນາຄານໂລກແມ່ນ ເຮັດຢ່າງຕໍ່ເນື່ອງ ຊຶ່ງຈະລວມເຖິງການທົບທວນ ກອບ ESMF ທີ່ຖືກຈັດຕັ້ງປະຕິບັດຜ່ານມາ, ພ້ອມນັ້ນ , ທາງບໍລິສັດທີ່ປຶກສາຍັງຕ້ອງໄດ້ທົບທວນຄືນ ບັນດາຂໍ້ກຳໜົດກົດລະບຽບຕ່າງໆທາງດ້ານນິຕິກຳ ທີ່ກ່ຽວຂ້ອງ ດ້ານສິ່ງແວດລ້ອມ ແລະ ສັງຄົມທີ່ນຳໃຊ້ຢູ່ໃນ ສປປ ລາວ ໂດຍສະເພາະ ແລະ ບໍ່ຈຳກັດພຽງ:

<u>ກົດໝາຍ ແລະ ຂໍ້ກຳໜົດກົດລະບຽບຕ່າງໆ</u>

- ລັດຖະທຳມະນູນຂອງ ສປປ ລາວ (2015);
- ກົດໝາຍການປົກປັກຮັກສາສິ່ງແວດລ້ອມ (2013);
- ກົດໝາຍທີ່ດິນ (2013);
- ກົດໝາຍຜັງເມືອງ (1999);
- ກົດໝາຍທາງຫລວງ (1999);
- ກົດໝາຍພັດທະນາ ແລະ ປົກປ້ອງແມ່ຍິງ (2004);
- ຂໍ້ແນະນຳຂອງກະຊວງເລກທີ 8030/ຊທສວ ກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ(2013);
- ຄູ່ມືແນະນຳການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (2012);
- ດຳລັດການຊົດເຊີຍ ແລະ ການຈັດສັນຍົກຍ້າຍປະຊາຊົນທີ່ຖືກຜົນກະທົບຈາກໂຄງການພັດທະນາ, ເລກທີ 84/ລບ(2016) ;
- ຄູ່ມືທາງດ້ານເຕັກນິກການແນະນຳຕໍ່ການຍົກຍ້າຍ ແລະ ການຊົດເຊີຍ (2010); ແລະ
- ບົດແນະນຳຂອງກະຊວງຕໍ່ການເຂົ້າຮ່ວມຂອງປະຊາຊົນໃນທຸກຂັ້ນຕອນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແລະ ສັງຄົມ ຈາກໂຄງການລົງທຶນ (2013).

**ນະໂຍບາຍຕ່າງໆ:**

- ລັດຖະທຳມະນູນ ແຫ່ງ ສປປ ລາວ (2015);
- ແຜນການ 5 ປີ ຄັ້ງທີ 8 ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ (ຜພສສຊ 2016-2020);
- ມະຕິກອງປະຊຸມສູນກາງພັກ ກ່ຽວກັບຈິນຕະນາການໃໝ່ດ້ານເຜົ່າຊົນສ່ວນນ້ອຍ(1992); ແລະ
- ແຜນນະໂຍບາຍ ການເຕີບໂຕທາງເສດຖະກິດ ແລະ ການຫລຸດຜ່ອນຄວາມທຸກຍາກ (2004).

### 2.2.3 ການເກັບກຳຂໍ້ມູນ

ບໍລິສັດທີ່ປຶກສາ ຈະນຳໃຊ້ເຄື່ອງມືທີ່ມີ ເຂົ້າໃນການເກັບກຳຂໍ້ມູນໃຫ້ໄດ້ທາງດ້ານຄຸນນະພາບ ແລະ ປະລິມານທີ່ຕ້ອງການ ທັງຂໍ້ມູນຕົ້ນສະບັບ ແລະ ຂໍ້ມູນເພີ່ມເຕີມ. ເຄື່ອງມືໃນການເກັບກຳຂໍ້ມູນດັ່ງກ່າວຈະລວມມີ ການສຳພາດບຸກຄົນທີ່ສຳຄັນ (KII), ການຈັດກຸ່ມປຶກສາຫາລື (FGD) ແລະ ການສຳພາດປະຊາຊົນຜູ້ທີ່ຄາດວ່າຈະຖືກຜົນກະທົບຈາກໂຄງການ (PAP) ແລະ ເຄື່ອງມືອື່ນໆ. ຈາກຂໍ້ມູນດັ່ງກ່າວຈະຊ່ວຍໃນການຊີ້ນຳ ແລະ ປັບປຸງກອບ ESMF, ກອບນະໂຍບາຍຕໍ່ການຈັດສັນຍົກຍ້າຍ (RPF) ແລະ ກອບການມີສ່ວນຮ່ວມຂອງຊົນເຜົ່າສ່ວນນ້ອຍ (EGEF).

### 2.2.4 ການປະຕິບັດຕໍ່ບັນດາຜູ້ມີສ່ວນໄດ້ເສຍ

ໃນການສຶກສາຄົ້ນຊຶ່ງລວມທັງ ການວິເຄາະ ບັນດາແຜນນະໂຍບາຍຂອງລັດຖະບານ ແຫ່ງ ສປປ ລາວ, ລະບຽບການ ແລະ ການຈັດຕັ້ງປະຕິບັດ ກ່ຽວກັບການເຂົ້າມີສ່ວນຮ່ວມຂອງປະຊາຊົນ, ການປະຕິບັດ ທາງນະໂຍບາຍ ຕໍ່ປະຊາຊົນ ແລະ ຂັ້ນຕອນໃນການວາງແຜນ, ລວມທັງຂັ້ນຕອນ ປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ. ບໍລິສັດທີ່ປຶກສາ ຈະຕ້ອງໄດ້:

(i) ສັງລວມ ບັນດາຜູ້ມີສ່ວນໄດ້ເສຍ ແລະ ພາກສ່ວນປະຊາຊົນທີ່ກ່ຽວຂ້ອງທັງໃນລະດັບຊາດ ແລະ ລະດັບທ້ອງຖິ່ນ;

(ii) ຂັ້ນຕອນ ການເຂົ້າຮ່ວມຂອງຜູ້ມີສ່ວນໄດ້ເສຍ ແລະ ປະຊາຊົນຫລາຍພາກສ່ວນ ໃນລະດັບຊາດ ແລະ ທ້ອງຖິ່ນ;

(iii) ພວມດຳເນີນ ແລະ ວາງແຜນຈະດຳເນີນການປັບປຸງຂີດຄວາມສາມາດ ແລະ ຄວາມຕ້ອງການໃນການຝຶກອົບຮົມ ໃຫ້ແກ່ບັນດາຜູ້ທີ່ມີສ່ວນໄດ້ເສຍ ຜູ້ທີ່ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດຕາມມາດຕະຖານສິ່ງແວດລ້ອມ ແລະ ສັງຄົມ ໃນແຕ່ລະຂັ້ນຕອນເລີ້ມຈາກ ການສຶກສາ ການວິພາກເສດຖະກິດ ເຕັກນິກ ແລະ ການອອກແບບກໍ່ສ້າງໂຄງການ. ຄູ່ຮ່ວມງານ ຈາກໜ່ວຍປະຕິບັດງານ ແລະ ຜູ້ທີມີສ່ວນໄດ້ເສຍ ໄດ້ຊາບຊຶ້ງ ແລະ ເຂົ້າໃຈ ຕໍ່ກັບການຈັດຕັ້ງປະຕິບັດຕາມມາດຕະຖານສິ່ງແວດລ້ອມ ແລະ ສັງຄົມ ຊຶ່ງຈະຊ່ວຍເອື້ອອຳນວຍໃຫ້ເຂົາເຈົ້າເຂົ້າມາມີສ່ວນຮ່ວມ, ເປັນເຈົ້າການໂຄງການ ຂອງກິດຈະການ, ແລະ ມີພາລະໜ້າທີ່ມີຄວາມຮັບຜິດຊອບ ຕະຫລອດຊ່ວງການຈັດຕັ້ງປະຕິບັດໂຄງການ.

### 2.2.5 ການມີສ່ວນຮ່ວມຂອງຊຸມຊົນໃນການປະເມີນຜົນທາງສັງຄົມ

ບໍລິສັດທີ່ປຶກສາ ຈະດຳເນີນງານຮ່ວມກັບ ຄູ່ຮ່ວມງານ ຂອງ ກະຊວງ ຍທຂ/ກົມໂຍທາທິການທາງນ້ຳ/ໜ່ວຍປະຕິບັດງານ (MPWT/DOW DIA)ໃນການພິຈາລະນາທົບທວນຢ່າງລະອຽດ ເພື່ອຮັບປະກັນວ່າ ປະຊາຊົນຫລາຍກຸ່ມຄົນ ແລະ ກຸ່ມຄົນທີ່ມີຄວາມອ່ອນແອ ຈະບໍ່ຖືກລະເລີຍຈາກຂະບວນການພິຈາລະນາຂອງໂຄງການຍ່ອຍ ຊຶ່ງກຳນົດ ໃນກອບ ESMF. ການເຮັດການປຶກສາ ແລະ ສອບຖາມ ຈະຕ້ອງເຮັດໂດຍການຮັບປະກັນສິດສະເໝີພາບ ແລະ ບົດບາດຍິງ-ຊາຍ ກ່ອນທີ່ຈະນຳມາປະເມີນຜົນກະທົບ ບົນ ເນື້ອໃນຈິດໃຈທີ່ໄດ້ລະບຸໄວ້ໃນໂຄງການຍ່ອຍ ແລະ ພົວພັນເຖິງຫລາຍກຸ່ມຄົນ (ເຊັ່ນວ່າ: ບັນດາກຸ່ມຊົນເຜົ່າສ່ວນນ້ອຍ ແລະ ກຸ່ມຄົນທີມີຄວາມອ່ອນແອ, ແມ່ຍິງ, ຜູ້ຊາຍ, ໄວໜຸ່ມ ເດັກນ້ອຍ, ຜູ້ສູງອາຍຸ ແລະ ຄົນພິການ, ອື່ນໆ...). ກ່ອນອື່ນ ປະຊາຊົນເຫຼົ່ານັ້ນ ຈະຖືກບອກວ່າເຂົາເຈົ້າມີສິດເຕັມສ່ວນ ກ່ອນທີ່ຈະໃຫ້ການຮ່ວມ ມືໃນຂະບວນ ການໃຫ້ສອບຖາມ ແລະ ສຳພາດ, ເພື່ອເປັນການເປີດກວ້າງ ແລະ ສາມາດປະເມີນ ບັນດາໂຄງການຍ່ອຍທີ່ໄດ້ຍື່ນສະເໜີ. ບັນດາກຸ່ມຊົນເຜົ່າຈະໄດ້ຮັບການປຶກສາຫາລື ແລະ ຮັບເອົາຄວາມເຫັນ ແລະ ບັນຫາຕ່າງໆຂອງຊົນເຜົ່າ ຫຼື ການຖາມກ່ຽວກັບໂຄງການຍ່ອຍທີ່ໄດ້ຍື່ນສະເໜີ ເນື່ອງຈາກວ່າອາດຈະສົ່ງຜົນກະທົບຕໍ່ຊີວິດການເປັນຢູ່ ແລະ ຊັບສິນ ຂອງເຂົາເຈົ້າ ບໍ່ວ່າຈະເປັນທາງກົງ ຫຼື ທາງອ້ອມ. ການປຶກສາຫາລືແມ່ນຈະມີບຸກຄົນທີ່ເປັນຊົນເຜົ່າຊ່ວຍໃນການແປພາສາໃນເວລາການຈັດກຸ່ມສົນທະນາ ແລະ ການສຳພາດຄົວເຮືອນ.

# 3.0 ແຜນການດໍາເນີນງານ

## 3.1 ກອງປະຊຸມຜ່ານມາ

ໜ່ວຍງານສະເພາະ ຂອງທະນາຄານໂລກ ເຮັດການແນະນໍາ ບໍລິສັດທີປຶກສາ ໃຫ້ ກັບ ຄູ່ຮ່ວມງານໃນຫນ່ວຍປະຕິບັດງານຂອງ ກະຊວງ ຍທຂ/ກົມໂຍທາທິການທາງນໍ້າ (MPWT/DOW) ໃນວັນທີ 9/5/2016.

## 3.2 ຂອບເຂດໜ້າວຽກ

ບໍລິສັດທີ່ປຶກສາ ຈະປະຕິບັດວຽກງານຮ່ວມກັບຄູ່ຮ່ວມງານ ໃນໜ່ວຍປະຕິບັດງານ ຂອງ ກະຊວງ ຍທຂ/ກົມໂຍທາທິການ ທາງນໍ້າ (MPWT/DOW) ແລະ ສະຖາບັນໂຍທາທິການ ແລະ ຂົນສົ່ງ (PTI) ເພື່ອປຶກສາຫາລື ແລະ ຕົກລົງໃນເນື້ອໃນຂໍ້ສະເໜີ ແລະ/ຫຼື ແຜນຈັດຕັ້ງປະຕິບັດຂອງໂຄງການຍ່ອຍ, ເພື່ອ ພິຈາລະນາມາດຕະການປ້ອງກັນ ແລະ ຮັບຮອງເອົາໄປນໍາໃຊ້ ໃນກິດຈະກໍາຂອງໂຄງການຍ່ອຍ. ທີ່ປຶກສາຈະຕ້ອງຮັບຮອງ ແຜນເຮັດວຽກພາກສະໜາມ, ງົບປະມານ, ແລະ ກໍານົດບັນດາຜູ້ທີ່ມີສ່ວນໄດ້ເສຍ ກຸ່ມທີ່ 1 ແລະ ກຸ່ມທີ 2 ແລະ ກຸ່ມປະຊາຊົນບັນດາເຜົ່າຕ່າງໆ (ບັນດາກຸ່ມຊົນເຜົ່າສ່ວນນ້ອຍ ແລະ ກຸ່ມຄົນທີ່ມີຄວາມອ່ອນແອ) ທີ່ຕ້ອງການພົບປະ ແລະ ສໍາພາດ ເປັນຕົ້ນ ໃນຂອບເຂດທີ່ຕັ້ງໂຄງການ ແລະ ໃນລະດັບຂອງຊຸມຊົນ.

ບໍລິສັດທີ່ປຶກສາ ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫຼືອທາງດ້ານເຕັກນິກ ໃຫ້ຄູ່ຮ່ວມງານ ຂອງໜ່ວຍປະຕິບັດງານຂອງ ກະຊວງ ຍທຂ/ກົມໂຍທາທິການທາງນໍ້າ (MPWT/DOW). ພະນັກງານທີ່ເປັນຄູ່ຮ່ວມງານໃນໜ່ວຍປະຕິບັດງານ ຂອງກົມໂຍທາທິການທາງນໍ້າ ມີຫນ້າທີ່ຮັບຜິດຊອບຕອບຮັບ ຂໍ້ສະເໜີຂອງໂຄງການຍ່ອຍ ແລະ ສະຖານທີ່ຈະລົງຢັ້ງຢາມພາກສະໜາມ, ກໍານົດບັນດາຜູ້ມີສ່ວນໄດ້ເສຍ ແລະ ປະຊາຊົນບັນດາເຜົ່າຕ່າງໆ (ບັນດາກຸ່ມຊົນເຜົ່າສ່ວນນ້ອຍ ແລະ ກຸ່ມຄົນທີ່ມີຄວາມອ່ອນແອ) ທີ່ຈະລົງເຮັດວຽກນໍາ.

## 3.3 ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມເບື້ອງຕົ້ນ (PESA)

ການສຶກສາວິເຄາະແມ່ນເພື່ອປະເມີນຜົນເບື້ອງຕົ້ນຕໍ່ກັບຄວາມອາດສາມາດທີ່ຈະກໍ່ໃຫ້ເກີດຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ຄວາມສ່ຽງດ້ານອື່ນໆ. ຈາກນັ້ນ ແຜນງານປະເມີນຜົນເບື້ອງຕົ້ນຕໍ່ກັບຄວາມອາດສາມາດທີ່ຈະກໍ່ໃຫ້ເກີດຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຫຼື PESA ຈະຊ່ວຍສະໜອງເຄື່ອງມືໃນການກໍາໜົດຄວາມອາດສາມາດເກີດຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ຄວາມສ່ຽງ ທີ່ອາດເກີດຈາກ ການປະຕິບັດ ຂໍ້ສະເໜີ ແລະ ແຜນງານຂອງໂຄງການຍ່ອຍ ຊຶ່ງນອນໃນໂຄງການ SEA DRM.

ຈາກແຫຼ່ງຂໍ້ມູນມີສອງ (ລວມທັງຂໍ້ມູນ ກອບ ESMF ຈາກການສະໜອງຂອງທະນາຄານໂລກ) ສະໜອງຂໍ້ມູນທາງສັງຄົມ, ວັດທະນະທໍາ ແລະ ຊັບພະຍາກອນທໍາມະຊາດ ຂອງຂອບເຂດທີ່ໄດ້ນໍາສະເໜີເຈດຈໍານົງ ແລະ ແຜນງານເປັນໂຄງການຍ່ອຍ. ພ້ອມດຽວກັນ, ຈາກການສຶກສາເບື້ອງຕົ້ນ ຕໍ່ຂໍ້ສະເໜີສະເພາະບັນຫາ ແລະ ແຜນງານຂອງໂຄງການຍ່ອຍ ແລະ ການທີ່ໄດ້ປຶກສາຫາລື ລົງເລິກ ກັບຄູ່ຮ່ວມງານ ຂອງ ກະຊວງ ຍທຂ/ກົມໂຍທາທິການທາງນໍ້າ ຫນ່ວຍປະຕິບັດງານ ແລະ ການໄດ້ເຮັດວຽກກັບບັນດາຜູ້ທີ່ມີສ່ວນໄດ້ເສຍ ຈະຊ່ວຍແຜນງານປະເມີນຜົນເບື້ອງຕົ້ນ ຫຼື PESA ໃຫ້ສາມາດພັດທະນາ ແລະ ເຫັນພົ້ນເດັ່ນຄວາມອາດສາມາດຂອງຜົນກະທົບ ແລະ ຄວາມສ່ຽງ.

ໜ່ວຍງານສະເພາະກິດ ຂອງກອບ ESMF ຊຶ່ງປະກອບດ້ວຍ ພະນັກງານລັດຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ, ພະນັກງານອາວຸໂສຂອງຊຸມຊົນທ້ອງຖິ່ນ, ທະນາຄານໂລກ ແລະ ບໍລິສັດທີ່ປຶກສາ ຈະອໍານວຍຄວາມສະດວກໃນການດໍາເນີນກອງປະຊຸມພົບປະຊຸມຊົນ ແລະ ຂະບວນການສະໜັບສະໜູນຈາກຊຸມຊົນຕົວຢ່າງ ໃນແຂວງອຸດົມໄຊ. ກອງປະຊຸມພົບປະຊຸມຊົນ ຈະສ້າງເງື່ອນໄຂໃຫ້ບັນດາຜູ້ທີ່ມີສ່ວນໄດ້ເສຍ ແລະ ກຸ່ມຊົນບັນດາເຜົ່າ ໄດ້ອອກສຽງ ສະແດງເຈດຈໍານົງຂອງຕົນ ແລະ ສະເໜີບັນຫາ ທີ່ອາດສາມາດເປັນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ຄວາມສ່ຽງທີ່ອາດເກີດຈາກການດໍາເນີນໂຄງການຍ່ອຍດັ່ງກ່າວ. ກອງປະຊຸມພົບປະຊຸມຊົນຍັງຊ່ວຍໃຫ້ໄດ້ຂໍ້ມູນ, ໄດ້ປຶກສາຫາລື ຕໍ່ບັນດາ ຂໍ້ຂ້ອງໃຈ ແລະ ກົນໄກການແກ້ໄຂບັນຫາ ເປີດໂອກາດໃຫ້ຮ້ອງທຸກຂໍຄວາມຊ່ວຍເຫຼືອ ອັນເນື່ອງຈາກການເຂົ້າໃຈຂັດແຍ້ງ ແລະ ມີຜົນກະທົບຕໍ່ການດໍາລົງຊີວິດ ສຸກທຸກຂອງປະຊາຊົນ.

## 3.4 ກອບຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ-ESMF

ກອບ ESMF ຈະຖືກສ້າງຂຶ້ນພາຍໃຕ້ລະບຽບການ ນະໂຍບາຍມາດຕະຖານຂອງທະນາຄານໂລກ (OP 4.01, 4.10 and 4.12) ແລະ ອີງຕາມ ເອກະສານແນະນໍາຈາກ ກອບ ESMF, ແລະ ຈາກບົດຮຽນອື່ນໆທີ່ໄດ້ສັງລວມຜ່ານການປະຕິບັດຕົວຈິງ ແລະ ຂໍ້ມູນເກັບກໍາພາກສະໜາມ. ກອບ ESMF ແມ່ນພາກສ່ວນໜຶ່ງຂອງ ການກະກຽມໃຫ້ກັບໂຄງການຍ່ອຍ ແລະ ສະໜອງຄວາມໝັ້ນໃຈໃນລະດັບໃດໜຶ່ງ ທີ່

ສະໜັບສະໜູນ ມາດຕະຖານໃຫ້ ສາມາດນຳໃຊ້ໄດ້ຕະຫຼອດຊ່ວງໄລຍະການສ້າງບົດວິພາກ ເສດຖະກິດເຕັກນິກ ແລະ ໄລຍະຂອງການອອກແບບດຳເນີນໂຄງການ ໃຫ້ປ້ອງກັນ ແລະ ຫລຸດຜ່ອນຂໍ້ຂັດແຍ່ງ ອັນເນື່ອງຈາກ ຄວາມສ່ຽງທີ່ອາດຈະເກີດຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມໃນບາດກ້າວການດຳເນີນໂຄງການຕົວຈິງ. ການຕົກລົງ ແລະ ການປຶກສາຫາລືແກ້ໄຂບັນຫາ ກັບພະນັກງານຄູ່ຮ່ວມງານຂອງ ກະຊວງ ຍທຂ/ກົມໂຍທາທິການທາງນ້ຳ ໜ່ວຍປະຕິບັດງານ (MPWT/DOW DIA), ກັບບັນດາຜູ້ມີສ່ວນໄດ້ເສຍ ແລະ ກຸ່ມປະຊາຊົນບັນດາເຜົ່າ ຈະເປັນວິທີທາງໃນການພັດທະນາເອກະສານ ກອບ ESMF, ການປັບປຸງສ້າງຄວາມເຂັ້ມແຂງ ແລະ ເພີ່ມຄວາມອາດສາມາດໃຫ້ແກ່ອົງກອນ, ແລະ ການເປີດກອງປະຊຸມປຶກສາຫາລື ແລະ ເວທີສົນທະນາ ແລະ ການເປີດເຜີຍຂ່າວສານຕໍ່ມວນຊົນ.

ກອບ ESMF ຈະສັງລວມເອົາ ການປຶກສາຫາລື ດ້ານຈຸດປະສົງລວມ ແລະ ຂອບເຂດ, ເງື່ອນໄຂເບື້ອງຕົ້ນຂໍ້ມູນພື້ນຖານດ້ານສິ່ງແວດລ້ອມ ແລະ ສັງຄົມ, ພື້ນຖານທາງດ້ານນິຕິກຳ ແລະ ລະບຽບການຕ່າງໆ, ເນື້ອໃນຂອງໂຄງການ ພ້ອມກັບບັນດາກິດຈະການຕົ້ນຕໍ ແລະ ຂໍ້ສະເໜີ ຈິດໃຈ ຄວາມຕ້ອງການຂອງໂຄງການຍ່ອຍ, ຂອບເຂດຂອງການແກ້ໄຂຫລຸດຜ່ອນຜົນກະທົບ ແລະ ມາດຕະການຄຸ້ມຄອງ ແລະ ປະເມີນຄວາມຕ້ອງການດ້ານງົບປະມານ, ແລະ ກຳໜົດສິດຂອບເຂດພາລະໜ້າທີ່ ແລະ ຄວາມຮັບຜິດຊອບ. ດັ່ງທີ່ມີຂໍ້ສະເໜີລິເລີ່ມໃນໂຄງການຍ່ອຍ ແລະ ບັນດາກິດຈະກຳ ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມຍັງບໍ່ທັນໄດ້ກຳໜົດ ແລະ ສຶກສາເທື່ອ, ກອບ ESMF ຍັງຈະກ່າວເຖິງແຜນງານໃນການປົກປ້ອງຕົນເອງເພື່ອການຍົກຍ້າຍຖິ່ນຖານ (OP4.12) ແລະ ເພື່ອສ້າງຂໍ້ຕົກລົງກັບຊົນເຜົ່າກຸ່ມນ້ອຍ (OP 4.10). ຊຶ່ງຈະມີລາຍລະອຽດດັ່ງຕໍ່ໄປນີ້:

### 3.4.1 ກອບນະໂຍບາຍຈັດສັນຍົກຍ້າຍ RPF

ກອບນະໂຍບາຍຈັດສັນຍົກຍ້າຍ ຫຼື RPF ເປັນແຜນງານທີ່ມີຄວາມໜັກແໜ້ນພາຍໃຕ້ຫລັກການຂອງທະນາຄານໂລກ (OP 4.12) ແລະ ເປັນແຜນງານທີ່ຊ່ວຍແນະນຳໃຫ້ຜູ້ຕັດສິນບັນຫາໄດ້ຄຳນຶງເຖິງບັນຫາທີ່ຈະຕ້ອງຍົກຍ້າຍ ການໄປຕັ້ງຖິ່ນຖານຢູ່ບ່ອນໃຫມ່ ຫາກເຫັນວ່າ ຂໍ້ຄິດເຫັນການລິເລີ່ມໂຄງການຍ່ອຍດັ່ງກ່າວເກີດມີຜົນກະທົບຫຼາຍຕໍ່ປະຊາຊົນບັດາເຜົ່າ. ແຜນການຈັດສັນຍົກຍ້າຍຂຶ້ນກັບລະດັບຄວາມຮຸນແຮງ ແລະ ຄວາມສັບສົນຂອງຂໍ້ສະເໜີ ເພື່ອການລິເລີ່ມໂຄງການຍ່ອຍ ແລະ ຜົນກະທົບຕໍ່ ການດຳລົງຊີວິດຂອງປະຊາຊົນບັນດາເຜົ່າໃນຂອບເຂດໂຄງການດັ່ງກ່າວ (ຕົວຢ່າງ. ເຂດຊຸມຊົນ, ການດຳລົງຊີວິດ ແລະ ຄວາມເປັນຢູ່ຂອງປະຊາຊົນ) ແລະ ໂດຍສະເພາະໃນສ່ວນທີ່ກ່ຽວຂ້ອງກັບການເຄື່ອນຍ້າຍປະຊາກອນ. ກອບ RPF ລວມເອົາຫລາຍສະພາບການທີ່ຜົນກະທົບອາດເກີດຂຶ້ນ ແລະ ເອື້ອອຳນວຍຄວາມອາດສາມາດ ຫລີກລ້ຽງ ຫຼື ຫຼຸດຜ່ອນຜົນກະທົບ ລວມທັງກົນໄກຫລຸດຜ່ອນຄວາມຂັດຂ້ອງໝອງໃຈ.

### 3.4.2 ກອບຂອງການສ້າງຂໍ້ຕົກລົງກັບກຸ່ມຊົນເຜົ່າ

ກອບຂອງການສ້າງຂໍ້ຕົກລົງກັບກຸ່ມຊົນເຜົ່າ (EGEF) ສະໜອງເອກະສານແນະນຳ (OP 4.10) ໃຫ້ຜູ້ຕັດສິນບັນຫາ ສາມາດກະກຽມຂະບວນການ ແລະ ດຳເນີນການສ້າງຂໍ້ຕົກລົງກັບກຸ່ມຊົນເຜົ່າ. ລະດັບການ ປະເມີນຜົນທາງສັງຄົມແມ່ນຂຶ້ນກັບເນື້ອໃນ ແລະ ຂະໜາດຂອງຂໍ້ສະເໜີລິເລີ່ມຈາກໂຄງການຍ່ອຍ ແລະ/ຫຼື ບັນດາແຜນງານ ແລະ ທ່າອ່ຽງທີ່ອາດເກີດຜົນກະທົບ ຕໍ່ຊົນເຜົ່າກຸ່ມນ້ອຍ. ກອບ ESMF ຍັງຈະຊ່ວຍຈຳແນກປະເພດ ຂອງຂໍ້ສະເໜີລິເລີ່ມຈາກໂຄງການຍ່ອຍ ແລະ ຊ່ວຍແນະນຳວ່າ EGEF ສາມາດໃຫ້ຂໍ້ມູນ ແກ່ຜູ້ຕັດສິນບັນຫາທາງດ້ານລະດັບຂອງຂໍ້ມູນ ແລະ ຄວາມຕ້ອງການວິເຄາະກ່ຽວກັບຂະບວນການປະເມີນຜົນທາງສັງຄົມ ແລະ ການຕອບຮັບທາງເພດ.

### 3.4.3 ແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ

ແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMP) ໄດ້ລະບຸຜົນກະທົບທີ່ອາດເກີດຂຶ້ນໃນຊ່ວງເວລາກ່ອນການກໍ່ສ້າງ, ຊ່ວງເວລາການກໍ່ສ້າງ ແລະ ຊ່ວງເວລາການດຳເນີນການ ແລະ ອະທິບາຍບັນດາມາດຕະການຕ່າງໆທີ່ຈະນຳມາໃຊ້ຢູ່ໃນຊ່ວງການຈັດຕັ້ງປະຕິບັດໂຄງການຍ່ອຍ ລວມທັງຫຼັກການ ການຈັດຕັ້ງປະຕິບັດທາງດ້ານສິ່ງແວດລ້ອມ (ECoP). ແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມເອົາໃຈໃສ່ດູແລດ້ານຜົນກະທົບຢ່າງສະໜຳສະເໜີ ເຊັ່ນວ່າການຄຸ້ມຄອງຜົນກະທົບດ້ານ ຝຸ່ນ, ສຽງ, ຂີ້ເຫຍື້ອ ແລະ ນ້ຳເປື້ອນ, ການຄຸ້ມຄອງບໍ່ດິນ, ການລົບກວນທຸລະກິດປະຈຳວັນຂອງປະຊາຊົນລຽບຕາມແຄມນ້ຳ ໂດຍສະເພາະແມ່ນເຂດໃນເທດສະບານເມືອງ ແລະ ຊານເມືອງ. ພື້ນທີ່ທີ່ມີຄວາມສ່ຽງຕໍ່ການຖືກຜົນກະທົບຈະຕ້ອງໄດ້ຮັບການຄຸ້ມຄອງ, ແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMP) ໄດ້ສະໜອງເຄື່ອງມືປ້ອງກັນ ໃນການອະທິບາຍວິທີການແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນໃນຫຼາຍຮູບແບບຈາກບັນດາໂຄງການລົງທຶນກໍ່ສ້າງພື້ນຖານໂຄງລ່າງ ເຊັ່ນວ່າ ໂຄງການປ້ອງກັນຕະຝັ່ງເຈື່ອນ ຢູ່ ແຂວງ ອຸດົມໄຊ.

## 3.5 ການສ້າງຂໍ້ຕົກລົງກັບຜູ້ມີສ່ວນໄດ້ເສຍ ແລະ ການດຳເນີນເວທີສົນທະນາ

ມາດຕະຖານຂອງ ທະນາຄານໂລກ OP 4.01 ຮັບຮອງໃຫ້ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ EA ສາມາດນຳໄປເປີດເຜີຍ ສຶກສາ ແລະ ປະກອບຄຳຄິດເຫັນສົມທົບຈາກມວນຊົນໃນກອງປະຊຸມເວທີສົນທະນາ. ທີ່ປຶກສາຈະເຮັດວຽກກັບຄູ່ຮ່ວມງານຈາກ ກະຊວງ ຍທຂ/ກົມໂຍທາທິການທາງນ້ຳ ໜ່ວຍປະຕິບັດງານ ໃນການກຳນົດບັນດາຜູ້ມີສ່ວນໄດ້ເສຍ ແລະ ປະຊາຊົນຫລາຍກຸ່ມຄົນ ຜູ້ຈະສ້າງຂໍ້ຕົກລົງ ແລະ ຊ່ວຍໃຫ້ຄຳປຶກສາໃນທຸກຂອດຂະບວນການຂອງ ESMF.

ຈຸດປະສົງຂອງການປຶກສາຫາລືກັບຊຸມຊົນ ແມ່ນເພື່ອ: (1) ນຳສະເໜີຂໍ້ມູນພື້ນຖານຕໍ່ກັບບັນດາຜູ້ມີສ່ວນໄດ້ເສຍ ແລະ ປະຊາຊົນ ຫລາຍກຸ່ມຄົນ; (2) ໄດ້ຮັບຄຳເຫັນ ຄຳຕິຊົມຈາກອົງການເຄື່ອນໄຫວທາງສັງຄົມຕ່າງໆ ລວມທັງອົງການ ທີ່ບໍ່ຂຶ້ນກັບລັດຖະບານ (NGOs), ສະມາຄົມເຄື່ອນໄຫວບໍ່ຫວັງຜົນກຳໄລ (NPAs); ຂັ້ນນຳໃນທ້ອງຖິ່ນ ແລະ ມວນຊົນອື່ນໆ ແລະ (3) ໄດ້ປຶກສາຫາລື ທາງດ້ານວິທີການ, ແຫຼ່ງຊັບພະຍາກອນ ເພື່ອເສີມຂະຫຍາຍໃຫ້ ຂໍ້ສະເໜີລິເລີ່ມຂອງໂຄງການຍ່ອຍ ນອນໃນໂຄງການ SEA DRM ໄດ້ຮັບໝາກຜົນສູງສຸດ. ກອງປະຊຸມປຶກສາຫາລື ແລະ ການມີສ່ວນຮ່ວມດັ່ງກ່າວ ສາມາດສ້າງໂອກາດໃຫ້ ກະຊວງ ຍທຂ/ກົມໂຍທາທິການທາງນ້ຳ ໄດ້ໂອ້ລົມຊອກໄດ້ຄວາມຂັດຂ້ອງໝອງໃຈຂອງປະຊາຊົນ ແລະ ຊອກຊ່ອງທາງແກ້ໄຂ ແລະ ປັບປຸງຂໍ້ສະເໜີລິເລີ່ມຂອງໂຄງການຍ່ອຍໃຫ້ມີຄວາມສົມບູນຂຶ້ນ.

# 4.0 ຜົນຈະໄດ້ຮັບ

## 4.1 ບົດລາຍງານຜົນໄດ້ຮັບ

ຮ່າງບົດລາຍງານຜົນໄດ້ຮັບສະບັບນີ້ (IR) ໄດ້ນຳສະເໜີ ແລະ ລາຍງານພາຍໃນ 2 ອາທິດ ຕາມການຕົກລົງໃນສັນຍາ. ບົດລາຍງານສະບັບນີ້ ຈະສັງລວມເອົາ ວິທີການດຳເນີນງານ, ແຜນໜ້າວຽກ ແລະ ຕາຕະລາງໜ້າວຽກລົງສະໜາມ, ລາຍລະອຽດດ້ານ ວິຊາການ ທີມງານ ແລະ ການມອບໝາຍງານ, ຕາຕະລາງເວລາສົ່ງຜົນສຳເລັດ ແລະ ລາຍງານ, ຮ່າງເບື້ອງຕົ້ນ ໂຄງປະກອບ PESA, ESMF, RPF, EGEF ແລະ ບັນຫາອື່ນໆ ທີ່ພົ້ນເດັ່ນກ່ຽວກັບໂຄງການ. ບົດລາຍງານຜົນໄດ້ຮັບນີ້ ຈະຕ້ອງໄດ້ຜ່ານການສຶກສາຄືນ ແລະ ໄດ້ປຶກສາເຈາະຈີ້ມດ້ານເນື້ອຫາ ກັບ ກະຊວງ ຍທຂ/ກົມໂຍທາທິການທາງນ້ຳ ແລະ ໜ່ວຍປະຕິບັດງານ ບັນດາຂັ້ນນຳກະຊວງຜູ້ມີສິດຕັດສິນບັນຫາ ແລະ ຜູ້ມີສ່ວນໄດ້ເສຍຈຳນວນໜຶ່ງ (ຕົວຢ່າງ. ທະນາຄານໂລກ ແລະ ຊ່ຽວຊານທີ່ປຶກສາ) ໃນກອງປະຊຸມຂັ້ນປະຖົມມະເລີກ ເພື່ອປຶກສາຫາລືກັບມວນຊົນ ແລະ ຄຳຄິດເຫັນຂອງກອງປະຊຸມຈະຕ້ອງຕິດຄັດເປັນບັນທຶກໃນບົດລາຍງານສະບັບສຸດທ້າຍ.

## 4.2 ຮ່າງບົດລາຍງານ

ຮ່າງບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມເບື້ອງຕົ້ນ ຫຼື PESA ຈະນຳສະເໜີເພື່ອການກວດຄືນໂດຍທະນາຄານໂລກ ແລະ ກະຊວງ ຍທຂ/ກົມໂຍທາທິການທາງນ້ຳ ໜ່ວຍປະຕິບັດງານ ເພື່ອຮັບປະກັນວ່າ ໄດ້ກວດຄືນທາງດ້ານເນື້ອໃນຢ່າງຄົບຖ້ວນທີ່ສອດຄ່ອງກັບຂໍ້ສະເໜີລິເລີ່ມໂຄງການຍ່ອຍດັ່ງກ່າວ. ພາຍຫລັງການກວດຄືນຢູ່ພາຍໃນແລ້ວ, ຮ່າງບົດ PESA ກວດຄືນນັ້ນຈະຈັດພິມເປັນຄັ້ງທີສອງແລ້ວສົ່ງໄປແປເປັນພາສາລາວ ກ່ອນສົ່ງຄືນໃຫ້ກະຊວງ ຍທຂ/ກົມໂຍທາທິການທາງນ້ຳ ໜ່ວຍປະຕິບັດງານ, ສຳເນົານຳສົ່ງໃຫ້ ບັນດາກະຊວງອື່ນໆ ແລະ ກົມກອງທີ່ກ່ຽວຂ້ອງ, ສົ່ງໃຫ້ອົງການຈັດຕັ້ງທາງສັງຄົມຂັ້ນສູນກາງ ແລະ ທ້ອງຖິ່ນ (CSOs) ອົງການຈັດຕັ້ງ ເອັນຈີໂອ (NGOs) ແລະ ນຳໄປອະທິບາຍໃນກອງປະຊຸມປຶກສາຫາລື ແລະ ເວທີສົນທະນາ.

ຮ່າງ ກອບ ESMF, ທີ່ລວມເອົາເອກະສານຊ້ອນທ້າຍ ຊຶ່ງແມ່ນເອກະສານໃຫ້ຄຳແນະນຳດ້ານ RPF ແລະ EGEF, ຈະຖືກສົ່ງໃຫ້ເພື່ອການກວດຄືນໂດຍທະນາຄານໂລກ ແລະ ກະຊວງ ຍທຂ/ກົມໂຍທາທິການທາງນ້ຳ ໜ່ວຍປະຕິບັດງານ ເພື່ອຮັບປະກັນວ່າໄດ້ມີເນື້ອໃນຄົບຖ້ວນ ແລະ ສອດຄ່ອງກັບແບບຢ່າງການດຳເນີນງານ ສຳລັບຂໍ້ສະເໜີລິເລີ່ມໂຄງການຍ່ອຍ ທີ່ໄດ້ພິຈາລະນາໃນ ສປປ ລາວ. ພາຍຫລັງການກວດຄືນຢູ່ພາຍໃນແລ້ວ, ຮ່າງສະບັບປັບປຸງບົດ ESMF ແລະ ບັນດາເອກະສານຊ້ອນທ້າຍ ທີ່ກວດຄືນນັ້ນຈະຈັດພິມເປັນຄັ້ງທີສອງແລ້ວສົ່ງໄປແປເປັນພາສາລາວ ກ່ອນສົ່ງຄືນໃຫ້ກະຊວງ ຍທຂ/ກົມໂຍທາທິການທາງນ້ຳ ໜ່ວຍປະຕິບັດງານ, ສຳເນົານຳສົ່ງໃຫ້ ບັນດາກະຊວງອື່ນໆ ແລະ ກົມກອງທີ່ກ່ຽວຂ້ອງ, ສົ່ງໃຫ້ອົງການຈັດຕັ້ງທາງສັງຄົມຂັ້ນສູນກາງ ແລະ ທ້ອງຖິ່ນ (ຕົວຢ່າງ. ອົງການຈັດຕັ້ງ NGOs, CBOs), ແລະ ນຳໄປອະທິບາຍໃນກອງປະຊຸມປຶກສາຫາລື ແລະ ເວທີສົນທະນາ.

ພາຍຫລັງສຳເລັດກອງປະຊຸມປຶກສາຫາລືຄັ້ງທີສອງແລ້ວ, ຮ່າງບົດສຸດທ້າຍຂອງ ກອບ ESMF ຊຶ່ງລວມທັງບັນດາເອກະສານຊ້ອນທ້າຍຈະທຳການກວດຄືນຊ້ຳວ່າໄດ້ບັນຈຸບັນດາຄຳເຫັນຕ່າງໆຈາກກອງປະຊຸມ. ຮ່າງບົດສຸດທ້າຍເອກະສານ ກອບ ESMF ນີ້ ຈະນຳສົ່ງໃຫ້ທະນາຄານໂລກ ຕາມເວລາທີ່ໄດ້ກຳໜົດ ໃນວັນທີ 8/8/2016.

## 4.3 ການດຳເນີນກອງປະຊຸມປຶກສາຫາລື ແລະ ເວທີສົນທະນາ

